**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ

ເລກທີ: 1773 /ກສ

ນະຄອນຫຼວງວຽງຈັນ, ວັນທີ: 30 APR 2026

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດ ແຜນການ ສົ່ງອອກ ຜັກກູດນາງມີ ປະຈຳປີ 2026

- ອີງຕາມ ດຳລັດ ວ່າດ້ວຍ ການຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ສະບັບເລກທີ 299/ລບ, ລົງວັນທີ 05 ມິຖຸນາ 2024,
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ບົດສຶກສາຄວາມຢູ່ລອດ ຂອງຊະນິດພັນ (NDF Non-Detriment Finding) ປະເພດ ຜັກກູດນາງມີ;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2170/ກປມ, ລົງວັນທີ 02 ເມສາ 2026;

**ລັດຖະມົນຕີ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

ມາດຕາ 1 ເຫັນດີອະນຸມັດ ແຜນການ ສົ່ງອອກ ຜັກກູດນາງມີ ປະຈຳປີ 2026 ຈຳນວນນໍ້າໜັກແຫ້ງ 7,699 (ເຈັດພັນຫົກຮ້ອຍເກົ້າສິບເກົ້າ) ໂຕນ.

ມາດຕາ 2 ມອບໃຫ້ ກົມປ່າໄມ້, ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ/ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພາກສ່ວນ ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ກວດກາ ການເຄື່ອນຍ້າຍ ແລະ ການສົ່ງອອກ ຜັກກູດນາງມີ ຈຳນວນ ດັ່ງກ່າວ ຢ່າງເຂັ້ມງວດ ແລະ ໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ, ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ, ຫຼີກລ່ຽງບໍ່ໃຫ້ມີການສວຍໃຊ້ໂອກາດ ຂຸດຄົ້ນ ແລະ ສົ່ງອອກ ທີ່ບໍ່ໄດ້ຮັບອະນຸຍາດ ຢ່າງເດັດຂາດ.

ມາດຕາ 3 ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ການນຳກະຊວງ ຮັບຊາບ ເປັນແຕ່ລະໄລຍະ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຮອງ. ລັດຖະມົນຕີ

ກົມປ່າໄມ້ (stamp): ກະຊວງກະສິກຳ ແລະ ສິ່ງແວດລ້ອມ — ລັດຖະມົນຕີ

ກິແກ້ວ ສີງນາວົງ

**ບ່ອນນຳສົ່ງ:**

| | | |
|---|---|---|
| 1. | ທ່ານ ລມຕ, ຮລມຕ ທ່ານລະ | 01 ສະບັບ; |
| 2. | ຫ້ອງການ ກະຊວງ ກສ | 01 ສະບັບ; |
| 3. | ກົມປ່າໄມ້ | 01 ສະບັບ; |
| 4. | ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 01 ສະບັບ; |
| 5. | ພະແນກ ກສ ແຂວງ/ນະຄອນຫຼວງ | 01 ສະບັບ; |
| 6. | ເກັບຮັກສາໄວ້ | 01 ສະບັບ. |